**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ກົມອາຫານ ແລະ ຢາ

ຄະນະຮັບຜິດຊອບຊີ້ນໍາລວມ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ

ທຶນກູ້ຢືມ ແລະ ຊ່ວຍເຫຼືອລ້າ

ໂທ: 021 214013-4

ເລກທີ 14463 /ກອຢ

ນະຄອນຫຼວງວຽງຈັນ, ວັນທີ 26 DEC 2022

## ໜັງສືແຈ້ງເຊີນເຂົ້າຮ່ວມປະມູນ

ຄະນະຮັບຜິດຊອບຊີ້ນໍາລວມ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ທຶນກູ້ຢືມ ແລະ ຊ່ວຍເຫຼືອລ້າ ກະຊວງສາທາລະນະສຸກ ຂໍຖືເປັນກຽດແຈ້ງມາຍັງທ່ານຜູ້ອໍານວຍການໂຮງງານ/ບໍລິສັດນໍາເຂົ້າຢາປົວພະຍາດ/ເຄື່ອງໃຊ້ການແພດສິ້ນເປືອງ/ນໍ້າຢາເຄມີຫ້ອງວິເຄາະ/ລົມອົກຊີແຊນ ທີ່ໄດ້ຮັບອະນຸຍາດດໍາເນີນທຸລະກິດຢູ່ ສປປລາວ ຊາບວ່າ:

1. ກະຊວງສາທາລະນະສຸກຈະໄດ້ປະມູນເພື່ອຄັດເລືອກຜູ້ສະໜອງ ລາຄາຢາປົວພະຍາດ, ເຄື່ອງໃຊ້ການແພດສິ້ນເປືອງ, ນໍ້າຢາເຄມີຫ້ອງວິເຄາະ ແລະ ລົມອົກຊີແຊນ ໃຫ້ແກ່ຂະແໜງການ ສາທາລະນະສຸກໃນຂອບເຂດທົ່ວປະເທດ ສົກປີ 2023 ເຊິ່ງໄດ້ແບ່ງອອກເປັນ 04 ພູດຄື:
   1.1 ຢາປົວພະຍາດ
   1.2 ເຄື່ອງໃຊ້ການແພດສິ້ນເປືອງ
   1.3 ນໍ້າຢາເຄມີຫ້ອງວິເຄາະ
   1.4 ລົມອົກຊີແຊນ
2. ການປະມູນດັ່ງກ່າວຈະດໍາເນີນໃນຮູບແບບການປະມູນເປີດກວ້າງທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້–ຈັດຈ້າງດ້ວຍທຶນຂອງລັດສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017; ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້–ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019 ແລະ ຂໍ້ຕົກລົງວ່າດ້ວຍການຈັດຊື້–ຈັດຈ້າງ ສິນຄ້າປະເພດຢາ, ຜະລິດຕະພັນການແພດ ແລະ ການບໍລິການ ດ້ວຍທຶນຂອງລັດ ສະບັບເລກທີ 1931/ສທ, ລົງວັນທີ 11 ກໍລະກົດ 2022 ໃນຂັ້ນຕອນນີ້ຈະມີແຕ່ບໍລິສັດ ແລະ ໂຮງງານ ທີ່ໄດ້ຖືກຮັບຮອງເປັນບໍລິສັດທີ່ມີຄຸນນະວຸດທິຢ່າງຄົບຖ້ວນເທົ່ານັ້ນຈຶ່ງຈະຖືກເຊີນເຂົ້າຮ່ວມແຂ່ງຂັນລາຄາໄດ້;
3. ບໍລິສັດທີ່ມີຄຸນນະວຸດທິທີ່ເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ກອງເລຂາຊ່ວຍວຽກຂອງຄະນະກໍາມະການວິຊາການຈັດຊື້-ຈັດຫາ ຢາປົວພະຍາດ, ເຄມີ, ເຄື່ອງໃຊ້ການແພດສິ້ນເປືອງ ແລະ ລົມອົກຊີແຊນ, ກົມອາຫານ ແລະ ຢາ ກະຊວງສາທາ ລະນະສຸກ, ບ້ານທາດຂາວ, ຖະໜົນສີເມືອງ, ເມືອງ ສີສັດຕະນາກ ນະຄອນຫຼວງວຽງຈັນ, ໂທ: 021 214013-4 ແລະ ຊື້ເອກະສານປະມູນໄດ້ຕາມທີ່ຢູ່ຂ້າງເທິງ ໃນວັນເວລາລັດຖະການ;
4. ເອກະສານປະມູນຄົບຊຸດທີ່ເປັນພາສາລາວສາມາດຊື້ໄດ້ໂດຍຜູ້ປະມູນທີ່ສົນໃຈແມ່ນ ໃຫ້ຍື່ນໜັງສືສະເໜີຫາ ກົມອາຫານ ແລະ ຢາ ກະຊວງສາທາລະນະສຸກ, ບ້ານທາດຂາວ, ຖະໜົນສີເມືອງ, ເມືອງ ສີສັດຕະນາກ ນະຄອນຫຼວງວຽງຈັນ ຫຼື ສູນສະໜອງຢາ ແລະ ອຸປະກອນການແພດ, ບ້ານ ຊຽງດາ ເມືອງ ໄຊເຊດຖາ ເລີ່ມແຕ່ວັນທີ 27 ທັນວາ 2022 ເປັນຕົ້ນໄປ, ໃນລາຄາພູດລະ 1,000,000 ກີບ (ໜຶ່ງລ້ານກີບຖ້ວນ), ສໍາລັບລົມອົກຊີແຊນແມ່ນລາຄາ 400,000 ກີບ (ສີ່ແສນກີບ) ຈໍານວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ, ວິທີການຊໍາລະຕ້ອງຈ່າຍເປັນເງິນສົດ;
5. ຊອງປະມູນຕ້ອງສົ່ງທີ່ ຫ້ອງປະຊຸມ ກະຊວງສາທາລະນະສຸກ ຊັ້ນ 4 ຕຶກເກົ່າ, ບ້ານທາດຂາວ, ຖະໜົນສີເມືອງ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ກ່ອນເວລາ 09:00 ໂມງ ຂອງວັນອັງຄານ ວັນທີ 31 ມັງກອນ 2023. ຊອງ

ປະມູນທີ່ສົ່ງມາທາງເອເລັກໂຕຼນິກຈະບໍ່ອະນຸຍາດ, ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆ ຊອງຈະໄດ້ເປີດໃນເວລາ 09:00 ໂມງ ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນຳ;

6. ເອກະສານປະມູນຕ້ອງໄດ້ປະກອບໜັງສືຄໍ້າປະກັນການປະມູນໂດຍການຢັ້ງຢືນ ແລະ ຮັບຜິດຊອບຕໍ່ໜ້າກົດໝາຍໃນສິ່ງທີ່ສະເໜີມາໃນລາຄາ ແລະ ເງື່ອນໄຂປະມູນ. ໜັງສືຄໍ້າປະກັນການປະມູນ ຕ້ອງແມ່ນໜັງສືຄໍ້າປະກັນດ້ວຍກຽດຂອງບໍລິສັດ ຊຶ່ງມີອາຍຸຄໍ້າປະກັນການປະມູນ 90 ວັນ ນັບແຕ່ມື້ເປີດຊອງວັນທີ 31 ມັງກອນ 2023 ເປັນຕົ້ນໄປ ແລະ ມີອາຍຸເພີ່ມອີກ 28 ວັນ.

**ຫົວໜ້າກົມ**

ຄະນະຊີ້ນຳລວມ ການຈັດຊື້-ຈັດຈ້າງ

ດ້ວຍທຶນຂອງລັດ,ທຶນກູ້ຢືມ ແລະ ຊ່ວຍເຫຼືອລ້າ

ກະຊວງສາທາລະນະສຸກ ກົມອາຫານ ແລະ ຢາ

ປອ. ດຣ. ບຸນຊູ ແກ້ວຫາວົງ